ຍຸດທະສາດ

ລາວ

2015

# WWF-ລາວ

ແຜນຍຸດທະສາດ (ວິທີການອະນຸລັກ) ແຕ່ປີ

2015-2020



ປ່າສະຫງວນແຫ່ງຊາດ ເຊຊັບ © Thomas Calame

# ພາກສະເໜີ

ສປປ ລາວ ຕັ້ງຢູ່ໃຈກາງຂອງທະວີບອາຊີຕາເວັນອອກສ່ຽງໃຕ້ ແລະ ມີຊາຍແດນຕິດຈອດກັບ 5 ປະເທດຄື: ກຳປູເຈຍ, ຈີນ, ມຽນມ້າ, ໄທ ແລະ ຫວຽດນາມ. ໃນນັ້ນແມ່ນ້ຳຂອງໄຫຼຜ່ານດິນແດນຂອງປະເທດ ລວມມີຄວາມຍາວທັງໝົດ 1,900 ກມ, ຊຶ່ງເນື້ອທີ່ສ່ວນໃຫ່ຍເປັນເຂດພູຜາປ່າດົງ. ສປປ ລາວ ເປັນປະເທດທີ່ມີຄວາມອຸດົມສົມບູນຮັ່ງມີທາງດ້ານຊັບພະຍາກອນທຳມະຊາດ ແລະ ໃນດ້ານຈຳນວນຂອງເນື້ອທີ່ປ່າໄມ້ຕໍ່ຫົວຄົນ ແລະ ລວມທັງ ຊັບພະຍາກອນນ້ຳ ຊຶ່ງຖືວ່າມີຈຳນວນຫຼາຍສຸດ ໃນບັນດາປະເທດລຸ່ມແມ່ນ້ຳຂອງ. ໃນນີ້ 80% ຂອງປະຊາກອນທັງໝົດ 6.5 ລ້ານຄົນ ແມ່ນອາໄສການດຳລົງຊີວິດຢູ່ເຂດຊົນນະບົດ ແລະ ຖືເອົາ ການຜະລິດກະສິກຳເປັນຕົ້ນຕໍໃນການດຳລົງຊີວິດ. ນອກນັ້ນ, ຍັງບໍລິໂພກເຄື່ອງປ່າຂອງດົງເປັນອາຫານປະຈຳວັນ ແລະ ຂາຍເປັນສິນຄ້າ ຈຳນວນໜຶ່ງອີກ.

ສປປ ລາວ ນອນຢູ່ໃນ 5 ເຂດພື້ນທີ່ເຂດບູລິມະສິດ ໃນຈຳນວນທັງໝົດ 200 ແຫ່ງທີ່ມີລະບົບນິເວດທີ່ອຸດົມສົມບູນລະດັບໂລກ ທີ່ຕ້ອງອະນຸລັກ ຊຶ່ງກຳນົດໂດຍອົງການ WWF, ເນື່ອງຈາກເປັນເຂດທີ່ມີຄວາມອຸດົມສົມບູນທີ່ສຸດໃນໂລກທາງດ້ານລະບົບນິເວດທີ່ຄວນຈະໄດ້ຮັບການອະນຸລັກໄວ້. ໃນນັ້ນ ສາຍພູຫຼວງ ທີ່ເປັນຊາຍແດນ ລະຫວ່າງ ສປປ ລາວ ແລະ ຫວຽດນາມ ຊຶ່ງກວມເອົາເນື້ອທີ່ ຈຳນວນ ເກືອບຮອດ 23 ລ້ານເຮັກຕາ ແລະ ເປັນເຂດໜຶ່ງທີ່ມີຄວາມໜາແໜ້ນທີ່ສຸດທາງດ້ານພຶດສານາໆພັນ ແລະ ສັດປ່າສະເພາະຖິ່ນ ໃນທະວີບນີ້. ທັງນີ້ ຢູ່ພາກໃຕ້ຂອງປະເທດລາວ, ແມ່ນ້ຳຂອງກໍ່ຍັງຖືວ່າເປັນແຫຼ່ງອູ່ເຂົ້າອູ່ປາທີ່ໃຫຍ່ທີ່ສຸດຂອງປະຊາຊົນພາຍໃນປະເທດ ແລະ ເປັນເຂດທີ່ມີຄວາມຫຼາກຫຼາຍຂອງສັດນ້ຳທີ່ເປັນເອກະລັກສະເພາະນຳອີກ. ພ້ອມດຽວກັນນີ້ ພາຍໃນຂອບເຂດຊາຍແດນຂອງປະເທດລາວ ຍັງມີຊະນິດພັນສັດ ທີ່ເປັນບຸລິມະສິດຕໍ່ການອະນຸລັກ ທີ່ຫາຍາກເປັນຕົ້ນແມ່ນຊ້າງອາຊີ, ໂອງ-ມັ່ງ, ປາຂ່າ, ປາບຶກ ແລະ ເສົາລາ.

ເຖິງແມ່ນວ່າ ປະເທດລາວ ຈະມີຄວາມຫຼາກຫຼາຍຂອງຊະນິດພັນພືດ ແລະ ສັດກໍ່ຕາມ, ແຕ່ຊີວະນາໆ ພັນທີ່ສົມບູນໃນປະເທດແມ່ນກຳລັງປະເຊີນໜ້າກັບໄພຂົ່ມຂູ່ຈຳນວນໜຶ່ງ. ໃນນີ້ ລວມມີ ອາຊະຍາກຳການຄ້າຂາຍສັດປ່າ, ການພັດທະນາໂຄງລ່າງພື້ນຖານ ແລະ ການສູນເສຍແຫຼ່ງທີ່ຢູ່ອາໄສຂອງຊະນິດພັນພືດ ແລະ ຊະນິດພັນສັດຢ່າງໄວວາແມ່ນໄດ້ກຳລັງເພີ່ມທະວີຄວາມສ່ຽງ ຕາມສະພາບຕົວຈິງ ແລະ ຍັງເກີດຂື້ນໃນປະຈຸບັນ ຕໍ່ສະພາບລະບົບນິເວດສະເພາະ ແລະ ແຫລ່ງທີ່ຢູ່ອາໄສຂອງບັນດາສັດປ່າ.

ດັ່ງນັ້ນ ວິໄສທັດການອະນຸລັກຂອງອົງການ WWF ຈິ່ງແນໃສ່ການສ້າງຄວາມເຊື່ອມໂຍງໃຫ້ມີຄວາມເຂັ້ມແຂງ ລະຫວ່າງ ການເຊື່ອມໂຊມດ້ານສິ່ງແວດລ້ອມ ແລະ ການຫຼຸດຜ່ອນຄວາມທຸກຍາກ ແລະ ພ້ອມທັງ ການສຸມໃສ່ພາລະບົດບາດຫລັກ ໃນການມີສ່ວນຮ່ວມ ແລະ ການຈັດສັນ ຄຸ້ມຄອງຊັບພະຍາກອນທຳມະຊາດ ເພື່ອການແບ່ງຜົນປະໂຫຍດອັນຊອບທຳ ໃນການປັບປຸງວິຖີການການດຳລົງຊີວິດ ຂອງປະຊາຊົນໝົດທຸກຄົນ.

## ຄວາມເປັນມາຂອງອົງການ

ອົງການ WWF ໄດ້ປະຕິບັດວຽກງານຢູ່ໃນ ສປປ ລາວ ນັບແຕ່ທ້າຍປີ 1980 ເປັນຕົ້ນມາ ແລະ ໄດ້ຮັບການອະນຸມັດສ້າງຕັ້ງຫ້ອງການປະຈຳ ສປປ ລາວ ຢ່າງເປັນທາງການໃນປີ 2001. ໃນປະຈຸບັນ, ສຳນັກງານໃຫ່ຍແມ່ນຕັ້ງຢູ່ນະຄອນຫຼວງວຽງຈັນ ໂດຍມີຫ້ອງການພາກສະໜາມ ຕັ້ງຢູ່ແຂວງສາລະວັນ, ເຊກອງ ແລະ ຈຳປາສັກອີກນຳ. ໃນນີ້ ແຜນງານການອະນຸລັກຂອງອົງການ ກຳລັງຢູ່ໃນທ່າກ້າວຂະຫຍາຍຕົວ ແລະ ປະສົບຜົນສຳເລັດຢ່າງຕໍ່ເນື່ອງໃນແຕ່ລະປີ, ໂດຍມີເປົ້າໝາຍລວມ ເພື່ອສ້າງອານາຄົດທີ່ເຮັດໃຫ້ມະນຸດດຳລົງຊີວິດຢູ່ກັບທຳມະຊາດໄດ້ຢ່າງກົມກຽວ.



## ແມ່ນ້ຳຂອງ

ແມ່ນ້ຳຂອງໄຫຼຜ່ານດິນແດນຂອງປະເທດລາວ ມີຄວາມຍາວເຖິງ 1,900 ກມ ແລະ ເປັນແຫຼ່ງການປະມົງທີ່ໃຫ່ຍທີ່ສຸດຂອງປະເທດ. ນອກນັ້ນ, ແມ່ນ້ຳຂອງຍັງເປັນແຫຼ່ງທີ່ຢູ່ອາໄສຂອງຊະນິດພັນພືດ ແລະ ສັດບຸລິມະສິດຕໍ່ການອະນຸລັກ ຂອງອົງການ WWF ເຊັ່ນ: ປາໂລມາອີລາວາດີນ້ຳຂອງ (ປາຂ່າ), ປາບຶກນ້ຳຂອງ ແລະ ປາຝານ້ຳຂອງ.

ແມ່ນ້ຳຂອງ ແລະ ເກາະດອນ © Adam Oswell / WWF



## ເປົ້າໝາຍຂອງພວກເຮົາ ເຖິງປີ 2020

ອົງການ WWF ປະຈຳ ສປປ ລາວ ໄດ້ກຳນົດເປົ້າໝາຍພື້ນທີ່ຈຸດສຸມ ແລະ ຊະນິດສັດປ່າ ແລະ ສັດນໍ້າບຸລິມະສິດ ສຳລັບການອະນຸລັກ ຮອດປີ 2020. ໃນນີ້ ເປົ້າໝາຍດ້ານພື້ນທີ່ຈຸດສຸມຂອງພວກເຮົາ ແມ່ນຈະໄດ້ສຸມໃສ່ວຽກງານອະນຸລັກເຂດປ່າທີ່ມີຄຸນຄ່າສູງ ທາງດ້ານການອະນຸລັກ ແລະ ແຫຼ່ງທີ່ຢູ່ອາໄສຂອງສັດນໍ້າ ໃນເຂດພື້ນທີ່ບຸລິມະສິດດັ່ງກ່າວ. ສ່ວນຊະນິດສັດປ່າ ແລະ ສັດນໍ້າບຸລິມະສິດ ແມ່ນຈະໄດ້ສຸມໃສ່ ວຽກງານອະນຸລັກຊ້າງ, ໂອງ-ມັ່ງ, ເສືອລາ, ບາງຊະນິດສັດນໍ້າໃນແມ່ນໍ້າຂອງ ແລະ ສັດສາຍພັນປະເພດຕີນກີບທີ່ສຳຄັນຕ່າງໆ.

ທີ່ເປັນແຫຼ່ງບ່ອນຢູ່ອາໄສຂອງໂອງ-ມັ່ງ © Ian Lacey / WWF-Laos



ໂຄງການໂຮງຮຽນສີຂຽວ © Adam Oswell / WWF



ການຫາປາ ຢູ່ເຂດນໍ້າຕົກຄອນພະເພັງ © Fletcher & Baylis / WWF-Greater Mekong



ສັດເລືອຄານ ຢູ່ເຂດປ່າສະຫງວນແຫ່ງຊາດເຊຊັບ © Thomas Calame

## ແຜນຍຸດທະສາດ (ວິທີການອະນຸລັກ) 5 ປີແຕ່ 2015-2020 ຂອງອົງການ WWF ປະຈຳ ສປປ ລາວ

ໃນແຜນຍຸດທະສາດສະບັບໃໝ່ນີ້, ອົງການ WWF ປະຈຳລາວ ຈະສຸມໃສ່ວຽກງານອະນຸລັກປ່າໄມ້, ສັດນໍ້າ ແລະ ສັດປ່າ, ຊຶ່ງຈະບໍ່ເປັນພຽງແຕ່ການປະກອບສ່ວນເຂົ້າໃນເປົ້າໝາຍການອະນຸລັກລະດັບໂລກຂອງອົງການ WWF ເທົ່ານັ້ນ, ແຕ່ວ່າ ຍັງຈະຊ່ວຍຫຼຸດຜ່ອນຄວາມທຸກຍາກ ໂດຍຜ່ານການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງອີກດ້ວຍ.

ເນື້ອໃນຕົ້ນຕໍຂອງແຜນຍຸດທະສາດສະບັບນີ້ ແມ່ນ 'ວິທີການກຳນົດເຂດພື້ນທີ່' ສຳລັບ ວຽກງານອະນຸລັກ. ທັງນີ້ກໍ່ເພື່ອແນໃສ່ສັງລວມ ການພັດທະນາ ແລະ ການອະນຸລັກເຂດພື້ນທີ່ຕ່າງໆເຂົ້າກັນ ໂດຍຜ່ານໂຄງການຕ່າງໆໃນແຕ່ລະອົງປະກອບທີ່ມີຄວາມແຕກຕ່າງກັນ, ໃນນັ້ນ ມີບາງວິທີແມ່ນຈະໄດ້ຮັບການຄຸ້ມຄອງບໍລິຫານເພື່ອສ້າງເປັນເປົ້າໝາຍການພັດທະນາ ແລະ ການປັບປຸງຊີວິດຄວາມເປັນຢູ່ ແລະ ເປົ້າໝາຍອື່ນໆ ທີ່ຕິດພັນກັບການອະນຸລັກ.

ອົງການ WWF ໄດ້ກຳນົດເອົາ 2 ເຂດພື້ນທີ່ບຸລິມະສິດ ທີ່ຈະສຸມໃສ່ຄື: ເຂດພື້ນທີ່ສາຍພູຫຼວງຕອນກາງ (ຮ່ວມກັນກັບອົງການ WWF ປະຈຳປະເທດ ຫວຽດນາມ), ແລະ ເຂດພື້ນທີ່ດິນບໍລິເວນແມ່ນໍ້າຂອງ (ຮ່ວມກັນກັບອົງການ WWF ປະຈຳປະເທດ ກຳປູເຈຍ).

ນອກນັ້ນ, ພວກເຮົາ ຍັງຈະອີງໃສ່ກິດຈະກຳ ທີ່ໄດ້ຮັບການຈັດຕັ້ງປະຕິບັດຢູ່ໃນເຂດບຸລິມະສິດສະເພາະທັງ 3 ແຫ່ງ. ໃນພາກຕາເວັນຕົກສ່ຽງເໜືອຂອງປະເທດ, ເຂດບຸລິມະສິດ ນໍ້າປຸຍ ປະກອບດ້ວຍ ເຂດອະນຸລັກແຫ່ງຊາດດ້ານຊີວະນາໆພັນ ຊຶ່ງເປັນຫນຶ່ງໃນບັນດາເຂດທີ່ມີຄວາມ ຫຼາຍທີ່ສຸດ ສຳລັບ ການອະນຸລັກຊ້າງອາຊີ. ເຂດພື້ນທີ່ບຸລິມະສິດສາຍພູຫຼວງພາກກາງຂອງປະເທດລາວ ແມ່ນສະຖານທີ່ ທີ່ໄດ້ຮັບການຍັ້ງຢືນ ກ່ຽວກັບຫວາຍໂດຍສະພາບໍລິຫານປ່າໄມ້ (FSC) ແລະ ການອະນຸລັກປ່າຂອງຊຸມຊົນ ທີ່ໄດ້ຮັບການຈັດຕັ້ງປະຕິບັດແບບທົດລອງສຳເລັດຮຽບຮ້ອຍແລ້ວ.

ເຂດບຸລິມະສິດແຂວງສະຫວັນນະເຂດ ແມ່ນແຫຼ່ງທີ່ຢູ່ອາໄສຂອງໂອງ-ມັ່ງ ທີ່ໃກ້ຈະສູນພັນ ແລະ ຕັ້ງຢູ່ພາຍໃນເຂດປ່າໂຄກແມ່ນໍ້າຂອງຕອນລຸ່ມ ຊຶ່ງເປັນບ່ອນທີ່ ມີການແນະນຳ ກ່ຽວກັບວິທີການວາງແຜນນຳໃຊ້ທີ່ດິນແບບປະສົມປະສານ ແລະ ການອະນຸລັກແບບມີສ່ວນຮ່ວມ.

ເພື່ອໃຫ້ບັນລຸຜົນໄດ້ຮັບດ້ານການອະນຸລັກທີ່ຍືນຍົງ ແລະ ມີໄດ້ຮັບຜົນສູງ, ພວກເຮົາໄດ້ປະສານງານຮ່ວມມືກັບຫນ່ວຍງານພາກລັດ, ຫົວໜ່ວຍທຸລະກິດ, ອົງການຈັດຕັ້ງທາງສັງຄົມ, ຊຸມຊົນ ແລະ ຊາວບ້ານ ຄຽງຄູ່ກັບການສ້າງຄວາມເຂັ້ມແຂງ ແລະ ຍົກລະດັບຂີດຄວາມສາມາດ ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງກັບການມີສ່ວນຮ່ວມຕໍ່ຂະບວນການຕັດສິນບັນຫາ.

ນອກນັ້ນ, ອົງການ WWF ປະຈຳ ສປປ ລາວ ຍັງຈະສຸມໃສ່ ວຽກງານປັບປຸງຊີວິດຄວາມເປັນຢູ່ຂອງຊາວບ້ານ ທີ່ອາໄສຢູ່ໃນ ແລະ ອ້ອມຂ້າງເຂດພື້ນທີ່ບຸລິມະສິດໃນການອະນຸລັກ ຊຶ່ງຈະເປັນການຊ່ວຍຫຼຸດຜ່ອນ ຄວາມກົດດັນຕໍ່ບັນຫາການດ້ານຊັບພະຍາກອນທຳມະຊາດ.

## ຍຸດທະສາດ (ວິທີການ) ເພື່ອນຳໄປສູ່ຄວາມສຳເລັດ

### ວິທີການ 1: ການວາງແຜນ ແລະ ການຄຸ້ມຄອງເຂດພື້ນທີ່ຈຸດສຸມ

- ເຊື່ອມສານການກຳນົດມູນຄ່າຕົ້ນທຶນທາງທຳມະຊາດ ເຂົ້າໃນການວາງແຜນພັດທະນາເພື່ອຫລຸດຜ່ອນຜົນກະທົບ ແລະ ການປ່ຽນແປງສະພາບດິນຟ້າອາກາດ
- ການປົກປັກຮັກສາປ່າທີ່ມີຄຸນຄ່າສູງດ້ານການອະນຸລັກ ໃນຂົງເຂດພື້ນທີ່ບຸລິມະສິດ
- ແກ້ໄຂບັນຫາການບຸກລຸກ ແຫຼ່ງທີ່ຢູ່ອາໄສ ທີ່ຢູ່ພາຍໃນເຂດບຸລິມະສິດ

### ວິທີການ 2: ຄຸ້ມຄອງປ່າສະຫງວນ ແລະ ສັດປ່າ

- ຫຼຸດຜ່ອນການຕັດໄມ້ທຳລາຍປ່າແບບຜິດກົດໝາຍ
- ຕ້ານການບຸກລຸກ ແລະ ລັກລອບລ່າສັດ ທີ່ເປັນຊະນິດພັນບຸລິມະສິດໃນການອະນຸລັກ
- ຢຸດອຸບປະສົງການບໍລິໂພກສັດບົກ ແລະ ສັດນໍ້າທີ່ໃກ້ສູນພັນ ໃນສູນກາງການຄ້າ
- ຮັກສາຈຳນວນປະຊາກອນສັດນໍ້າ ແລະ ກຳນົດເປົ້າໝາຍດ້ານຄວາມຫຼາກຫຼາຍຂອງຊີວະນາໆພັນຂອງປ່າໂຄກໃນແຂວງສະຫວັນນະເຂດທີ່ເປັນແຫຼ່ງບ່ອນຢູ່ອາໄສຂອງໂອງ-ມັ່ງ



## ການຄຸ້ມຄອງຊັບພະຍາກອນທຳມະຊາດໂດຍທີ່ມີຊຸມຊົນເປັນເຈົ້າການ

ໂດຍຜ່ານການຍົກລະດັບຂີດຄວາມສາມາດໃຫ້ຊຸມຊົນ ເພື່ອໃຫ້ພວກເຂົາສາມາດຄຸ້ມຄອງຊັບພະຍາກອນທຳມະຊາດຂອງຕົນ, ໃນນັ້ນລວມມີຜົນປະໂຫຍດຕໍ່ປະຊາຊົນ ແລະ ຕໍ່ທຳມະຊາດໃຫ້ປະສົບຜົນສຳເລັດ. ໃນນີ້ ອົງການ WWF ເຮັດວຽກເພື່ອສົ່ງເສີມການຄຸ້ມຄອງປ່າຫວາຍ ແລະ ຊັບພະຍາກອນທາງນ້ຳ ແບບຍືນຍົງຢູ່ພາກກາງ ແລະ ພາກໃຕ້ຂອງປະເທດລາວ.

ຊາວບ້ານນຳໃຊ້ຫວາຍ ຈັກສານກະຕ່າ © Bounheaung Khampa / WWF-Laos

# ວິທີການ 3: ການລົງທຶນທີ່ມີຄວາມຮັບຜິດຊອບ, ການຜະລິດ ແລະ ການບໍລິໂພກ

- ຮັບປະກັນການບໍລິໂພກທີ່ມີຄວາມຍືນຍົງ ກ່ຽວກັບ ສິນຄ້າຕົ້ນຕໍ ທີ່ສົ່ງຜົນກະທົບຕໍ່ຄວາມຫຼາກຫຼາຍຂອງຊີວະນາໆພັນ
- ເພີ່ມທະວີຈຳນວນພື້ນທີ່ປ່າໄມ້ທີ່ຜ່ານການຢັ້ງຢືນຈາກ FSC ໃນເຂດພື້ນທີ່ບຸລິມະສິດ
- ກະຕຸກຊຸກຍູ້ໃຫ້ມີການນຳໃຊ້ຫຼັກການການໃຊ້ເຮືອ ຂອງຫົວໜ່ວຍທຸລະກິດ ຕາມລຳແມ່ນ້ຳ
- ສົ່ງເສີມມາດຕະການຫຼີກລ້ຽງ ສິນຄ້າປ່າໄມ້ທີ່ຜິດກົດໝາຍ ໃນຂົງເຂດບຸລິມະສິດ

## ຄວາມຍືນຍົງ

ເພື່ອໃຫ້ຍຸດທະສາດ (ວິທີການອະນຸລັກ) ເຫຼົ່ານີ້ ປະກົດຜົນເປັນຈິງ, ພວກເຮົາຈະຕ້ອງຮັບປະກັນ ໃຫ້ວຽກງານຂອງເຮົາ ໄດ້ສະແດງໃຫ້ເຫັນເຖິງຜົນໄດ້ຮັບ ແລະ ວິທີປະຕິບັດທີ່ດີ ກ່ຽວກັບ ວຽກງານອະນຸລັກ, ພ້ອມກັບການຊ່ວຍສ້າງຄວາມເຂັ້ມແຂງໃຫ້ນະໂຍບາຍຂອງພາກລັດ,ເຊື່ອມສານວິທີການອະນຸລັກຂອງພວກເຮົາ, ສ້າງສາຍພົວພັນວຽກງານກັບພາກສ່ວນທີ່ກ່ຽວຂ້ອງໃຫ້ເຂັ້ມແຂງ, ສ້າງການພົວພັນກັບຫົວໜ່ວຍທຸລະກິດຕາມຄວາມເໝາະສົມ ແລະ ປູກຝັງຈິດສຳນຶກຂອງປະຊາຊົນ. ທັງຫມົດເຫລົ່ານັ້ນແມ່ນເປັນການສະຫນັບສະຫນູນໃຫ້ຈັດຕັ້ງປະຕິບັດໂຄງການອະນຸລັກທີ່ມີຈະສາມາດກ້າວໄປສູ່ຄວາມຍືນຍົງ ແລະ ມີສະຖຽນລະພາບໃນໄລຍະຍາວໄດ້ເປັນຢ່າງດີ.

ຊ້າງອາຊີ © Khamkhoun Khounboline / WWF-Laos




ອົງການ WWF ປະຈຳ ສປປ ລາວ ໄດ້ກຳນົດເອົາ 3 ຊະນິດພັນສັດປົກ ແລະ ສັດນ້ຳຈືດສະເພາະຖິ່ນຂະໜາດໃຫຍ່ຈຳນວນໜຶ່ງ ເປັນບຸລິມະສິດຂອງການອະນຸລັກ ໃນແຜນຍຸດທະສາດ ໄລຍະ ແຕ່ປີ 2015-2020.

## ວິໄສທັດຂອງອົງການ WWF ປະຈຳ ສປປ ລາວ ແຕ່ນີ້ ຈົນເຖິງປີ 2030

ວິໄສທັດຂອງພວກເຮົາແມ່ນການຮັກສາລະດັບຜົນກະທົບຈາກການທຳຂອງມະນຸດຕໍ່ສະພາບແວດລ້ອມ ໂດຍອີງຕາມລະດັບສະພາບຂອງຄວາມອາດສາມາດ ຕົວຈິງຂອງປະເທດໃນເວລານີ້ ຕໍ່ການປົກປັກຮັກສາລະດັບຄວາມຫຼາກຫຼາຍດ້ານຊີວະນາໆພັນ ແລະ ລະບົບນິເວດ, ແລະ ການບໍລິການທີ່ສຳຄັນຂອງລະບົບນິເວດໃນການສະຫນອງ ໃຫ້ແກ່ການປັບປຸງວິຖີການດຳລົງຊີວິດຂອງປະຊາຊົນລາວ ແລະ ປະກອບສ່ວນເຂົ້າໃນວຽກການອະນຸລັກໂດຍລວມຂອງລະບົບນິເວດ ໃນເຂດພາກພື້ນແມ່ນ້ຳຂອງແບບຍືນຍົງ.

# ພື້ນທີ່ຈຸດສຸມ ແລະ ເຂດບຸລິມະສິດ ໃນການຈັດຕັ້ງວຽກງານ ຂອງອົງການ ແຕ່ປີ 2015-2020




WWF

**Why we are here**

To stop the degradation of the planet's natural environment and to build a future in which humans live in harmony with nature.

panda.org

© 1986 Panda Symbol WWF-World Wide Fund For Nature (formerly World Wildlife Fund)
® WWF is a WWF Registered Trademark

ອົງການກອງທຶນອະນຸລັກທຳມະຊາດໂລກ (WWF) ປະຈຳ ສປປ ລາວ
ເຮືອນເລກທີ 39, ໜ່ວຍ 5,
ບ້ານ ສາຍລົມ, ເມືອງ ຈັນທະບູລີ
ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທ: +856 (21) 216080
ແຟກ: +856 (21) 251883
ເວັບໄຊ້: www.wwflaos.org
www.facebook.com/wwflaosoffice